## ກຳຈັດຄວາມຫຍຸ້ງຍາກ

ມີຜູ້ກຳຈັດ ຄວາມຫຍຸ້ງຍາກອື່ນໃດ ອີກຫລື ນອກຈາກພຣະຜູ້ເປັນເຈົ້າ? ຈົ່ງກ່າວວ່າ: ຄວາມສັນລະເສີນ ຈົ່ງເປັນ ຂອງພຣະຜູ້ເປັນເຈົ້າ !

ພຣະອົງ ຄື ພຣະຜູ້ເປັນເຈົ້າ! ທຸກຄົນ ເປັນຄົນຮັບໃຊ້ ຂອງພຣະອົງ, ແລະ ທຸກ ຄົນຢູ່ໃຕ້ ພຣະບາລະມີ ຂອງພຣະອົງ !

*- ພຣະບ໊ອບ.*



## ຕອນເຊົ້າ

ຂ້າພຣະອົງ ໄດ້ຕື່ນຂຶ້ນມາພາຍໃຕ້ ຮົ່ມເງົາ ແຫ່ງພຣະບາລະມີຂອງພຣະອົງ ຂ້າແດ່ ພຣະຜູ້ເປັນເຈົ້າ ຂອງຂ້າພຣະອົງ, ແລະ ຜູ້ທີ່ສະແຫວງຫາຮົ່ມໂພທິສົມພານ ຂອງພຣະອົງ ເຂົາຜູ້ນັ້ນຈະດຳລົງຊີວິດຢູ່ ຢ່າງປອດໄພ ພາຍໃຕ້ຄວາມຄຸ້ມຄອງ ແລະ ປ້ອງກັນປະກັນໄພຂອງພຣະອົງ. ຊົງໂປດ ປະທານ ແສງສະຫວ່າງ ເຂົ້າໃສ່ຈິດວິນຍານ ຂອງຂ້າພຣະອົງ, ດ້ວຍແສງແຫ່ງພຣະທັມ ອັນປະເສີດແຫ່ງການເປີດເຜີຍ

ຂອງພຣະອົງ ເຊັ່ນດຽວ ທີ່ພຣະອົງຊົງໂປດ ປະທານແສງສະຫວ່າງໃຫ້ແກ່ຮູບກາຍພາຍ ນອກຂອງຂ້າພຣະອົງ ດ້ວຍລັດສະໝີແສງ ຮຸ່ງອາລຸນແຫ່ງພຣະກະລຸນາ ຂອງພຣະອົງ.

*- ພຣະບາຣາອຸລລາທ໌.*



## ກ່ອນເດີນທາງ

ຂ້າແດ່ ພຣະຜູ້ເປັນເຈົ້າຂອງຂ້າພຣະອົງ, ຂ້າພຣະອົງໄດ້ຕື່ນຂຶ້ນມາຍາມເຊົ້ານີ້ ດ້ວຍພຣະກະລຸນາຂອງພຣະອົງ, ແລະ ໄດ້ ອອກຈາກບ້ານ ດ້ວຍຄວາມເຊື່ອໝັ້ນໃນ ພຣະອົງ, ແລະ ມອບຕົນໄວ້ໃນຄວາມດູແລ ຂອງພຣະອົງ. ຂໍນະພາແຫ່ງຄວາມປານີ ຂອງພຣະອົງຫລັ່ງພຣະພອນ ໃຫ້ແກ່ຂ້າ ພຣະອົງ, ແລະ ຊ່ວຍໃຫ້ຂ້າພຣະອົງ ກັບ ບ້ານດ້ວຍຄວາມປອດໄພດັ່ງທີ່ ພຣະອົງ ຊ່ວຍໃຫ້ຂ້າພຣະອົງ

ອອກເດີນທາງ ພາຍໃຕ້ຄວາມຄຸ້ມຄອງ ຂອງພຣະອົງ. ດ້ວຍຄວາມນຶກຄິດທີ່ຢຶດໝັ້ນຢູ່ກັບພຣະອົງ.

ບໍ່ມີພຣະຜູ້ເປັນເຈົ້າອັ່ນໃດອີກ ນອກຈາກພຣະອົງ, ພຣະຜູ້ເປັນໜຶ່ງ, ພຣະຜູ້ບໍ່ມີປຽບປານ, ພຣະຜູ້ຊົງຮອບຮູ້, ພຣະຜູ້ຊົງອັດສະລິຍະພາບ.

*- ພຣະບາຮາອຸລລາຫ໌.*



# ກ່ອນເຂົ້ານອນ

ຂ້າແດ່ພຣະຜູ້ເປັນເຈົ້າ, ພຣະຜູ້ເປັນເຈົ້າຂອງຂ້າພຣະອົງ, ພຣະຜູ້ເປັນທີ່ໝາຍປອງ ຂອງຂ້າພຣະອົງ, ຄົນຮັບໃຊ້ຜູ້ນີ້ຂອງພຣະອົງ, ຂໍນອນໃນທີ່ກຳບັງ ຂອງພຣະອົງ, ແລະ ຂໍພັກຜ່ອນ ຢູ່ພາຍໃຕ້ລຸ່ມຟ້າ ແຫ່ງພຣະກະລຸນາຂອງພຣະອົງ, ວິງວອນຂໍໃຫ້ພຣະອົງດູແລ ແລະ ຄຸ້ມຄອງ.

ຂ້າພຣະອົງຂໍອ້ອນວອນຕໍ່ພຣະອົງ,ຂ້າແດ່ພຣະຜູ້ເປັນນາຍ, ດ້ວຍພຣະເນດ ຂອງພຣະອົງທີ່ບໍ່ເຄີຍຫລັບນັ້ນ, ຂໍຊົງປົກປ້ອງ

ດວງຕາຂອງຂ້າພຣະອົງ, ຈາກການມອງເຫັນສິ່ງອື່ນໃດນອກຈາກພຣະອົງ

ຂໍຊົງເບີກສາຍຕາ ຂອງຂ້າພຣະອົງໃຫ້ມອງເຫັນ ສັນຍາລັກ ຂອງພຣະອົງ, ແລະ ເຫັນຂອບຟ້າຈັກກະວານ ແຫ່ງການເປີດເຜີຍພຣະທັມຂອງພຣະອົງ, ພຣະອົງຄືພຣະຜູ້ຊົງທັມອັນຍິ່ງໃຫຍ່ ເໜືອອຳນາດທັງມວນ ແລະ ອຳ ນາດໃດໆ ຕ້ອງຫວັ່ນໄຫວຕໍ່ການເປີດເຜີຍ ອານຸພາບ ຂອງພຣະອົງ.

ບໍ່ມີພຣະຜູ້ເປັນເຈົ້າອື່ນໃດ ນອກຈາກພຣະອົງ, ພຣະຜູ້ຊົງມະຫິທານຸພາບ, ພຣະ



ຜູ້ຊົງຜາບແພ້ທຸກສັບພະສິ່ງ, ພຣະຜູ້ຊົງສະພາວະສູງສຸດ.

*- ພຣະບາຮາອຸລລາຫ໌.*

## ສຳລັບເດັກ

ຂ້າແດ່ ພຣະຜູ້ເປັນເຈົ້າ,
ໂປດນຳທາງ ແກ່ຂ້າພຣະອົງ,
ໂປດຄຸ້ມຄອງ ຂ້າພຣະອົງ
ໂປດບັນດານ ໃຫ້ຂ້າພຣະອົງ
ເປັນຕາກຽງ ທີ່ສະຫວ່າງສະໄຫວ
ແລະ ດວງດາວທີ່ສົດໃສ.
ພຣະອົງຄື ພຣະຜູ້ຊົງອຳນາດ
ແລະ ຊົງພະລານຸພາບ.

*- ພຣະອັບດຸລບາຮາ.*



## ສຳລັບເດັກ

ຂ້າແດ່ ພຣະຜູ້ເປັນເຈົ້າຂອງຂ້າ ພຣະອົງ ! ໂປດລ້ຽງດູເດັກນ້ອຍຜູ້ນີ້ໄວ້ ໃນອ້ອມອົກ ແຫ່ງຄວາມຮັກຂອງພຣະອົງ ໃຫ້ເຂົາໄດ້ດື່ມນ້ຳນົມຈາກອົກ ແຫ່ງການ ບໍລິບານຂອງພຣະອົງ ໂປດເພາະປູກພືກ ສາຊາດຕົ້ນນີ້ທີ່ຍັງໃໝ່ສົດ ໄວ້ໃນສວນ ກຸຫລາບແຫ່ງຄວາມຮັກຂອງພຣະອົງ ໂປດ ບັນດານໃຫ້ເຂົາເປັນເດັກ ໃນອານາຈັກສະ ຫວັນ ແລະ ນຳເຂົາໄປສູ່ແດນທັມ ພຣະ ອົງຊົງອານຸພາບ ແລະ ຊົງເມດຕາ

ພຣະອົງ ຄື ພຣະຜູ້ຊົງ ປະທານພອນ ພຣະຜູ້ຊົງ ເອື້ອເຟື້ອ ພຣະຜູ້ເປັນນາຍ ແຫ່ງຄວາມອາລີ

*- ພຣະອັບດຸລບາຣາ.*



## ສຳລັບເດັກ

ຂ້າແດ່ພຣະຜູ້ເປັນເຈົ້າ! ໂປດອົບຣົມ ເດັກເຫລົ່ານີ້ ເດັກເຫລົ່ານີ້ ຄືພືກສາຊາດ ໃນສວນໝາກໄມ້ຂອງພຣະອົງ, ຄືບຸຜາໃນ ທົ່ງຫຍ້າ ຂອງພຣະອົງ, ຄືດອກກຸຫລາບ ໃນອຸດທະຍານຂອງພຣະອົງ. ໂປດຊົງປະ ທານນ້ຳຝົນ ມາໃຫ້ແກ່ພວກເຂົາ; ໂປດໃຫ້ ດວງຕາເວັນແຫ່ງສັດຈະ ສ່ອງແສງແຫ່ງ ຄວາມຮັກ ຂອງພຣະອົງມາຍັງພວກເຂົາ. ໂປດໃຫ້ສາຍລົມຂອງພຣະອົງ ພັດຄວາມ ສົດຊື່ນມາໃຫ້ພວກເຂົາ ເພື່ອວ່າພວກ

ເຂົາຈະໄດ້ຮັບ ການອົບຮົມ ຈະໄດ້ເຕີບໂຕ ພັດທະນາໃຫ້ປາກົດ ຂຶ້ນຢ່າງງົດງາມທີ່ສຸດ. ພຣະອົງຄືພຣະຜູ້ໃຫ້ !

ພຣະອົງຄືພຣະຜູ້ຊົງເຫັນໃຈ !

*- ພຣະອັບດຸລບາຮາ.*



## ສຳລັບຊາວໜຸ່ມ

ຂ້າແດ່ພຣະຜູ້ເປັນນາຍ ! ໂປດບັນດານໃຫ້ຊາວໜຸ່ມຜູ້ນີ້ຮຸ່ງເຮືອງ ໂປດປະທານພອນໃຫ້ແກ່ຜູ້ອ່ອນແອນີ້ ໂປດປະທານຄວາມຮູ້ ແລະ ເພີ້ມພູນກຳລັງ ໃຫ້ແກ່ເຂົາທຸກຮຸ່ງອາລຸນ ໂປດປົກປ້ອງເຂົາໄວ້ໃນທີ່ກຳບັງ ແຫ່ງຄວາມຄຸ້ມຄອງຂອງພຣະອົງ ເພື່ອວ່າເຂົາຈະໄດ້ບໍ່ຫລົງຜິດ ຈະອຸທິດຕົນຮັບໃຊ້ສາສະໜາຂອງພຣະອົງ ຊີ້ແນະຜູ້ມີທິດຖິ ນຳທາງຜູ້ເຄາະຮ້າຍປົດປ່ອຍຜູ້ຖືກຄອບງຳ ປຸກຜູ້ປະໝາດໃຫ້ມີສະຕິ

ເພື່ອວ່າທຸກຄົນຈະໄດ້ຮັບພອນ ດ້ວຍການສັນລະເສີນ ແລະ ລະນຶກເຖິງພຣະອົງ ພຣະອົງຄື ພຣະຜູ້ຊົງອຳນາດ ພຣະຜູ້ຊົງອານຸພາບ.

*- ພຣະອັບດຸລບາຮາ..*



# ເພື່ອບິດາມານດາ

ຂ້າແດ່ພຣະຜູ້ເປັນນາຍ ພຣະອົງຊົງເຫັນແລ້ວວ່າ ມືຂອງຂ້າພຣະອົງທັງຫລາຍຍົກຂຶ້ນ ວິງວອນນະພາແຫ່ງພຣະກະລຸນາ ແລະ ຄວາມອາລີຂອງພຣະອົງ ຂໍໃຫ້ມືນີ້ໄດ້ຮັບສົມບັດ ຈາກຄວາມໂອບອ້ອມອາລີ ແລະ ພຣະກະລຸນາຂອງພຣະອົງ ຂໍຊົງໃຫ້ອະໄພແກ່ຂ້າພຣະອົງທັງຫລາຍ ບິດາແລະມານດາ ຂອງຂ້າພຣະອົງທັງຫລາຍ ແລະໂປດໃຫ້ ຂ້າພຣະອົງທັງຫລາຍ ສົມປາດຖະໜາ ໃນສິ່ງທີ່ຂ້າພຣະອົງທັງຫລາຍຕ້ອງ

ການ ຈາກມະຫາສະມຸດ ແຫ່ງ ພຣະກະລຸນາ ແລະ ຄວາມອາລີຂອງພຣະອົງ ຂ້າແດ່ພຣະຜູ້ເປັນທີ່ຮັກຍິ່ງ ຂອງຫົວໃຈຂອງຂ້າພຣະອົງທັງຫລາຍ ໂປດຍອມຮັບວຽກງານທຸກຢ່າງ ທີ່ຂ້າພຣະອົງທັງຫລາຍ ກະທຳໃນວິຖີຂອງພຣະອົງ ແທ້ຈິງແລ້ວ ! ພຣະອົງຄື ພຣະຜູ້ຊົງອານຸພາບສູງສຸດ ພຣະຜູ້ຊົງປະເສີດສຸດ ພຣະຜູ້ບໍ່ມີປຽບປານ ພຣະຜູ້ເປັນໜຶ່ງພຣະຜູ້ຊົງອະໄພ ພຣະຜູ້ຊົງກະລຸນາ.

*- ພຣະບາຮາອຸລລາທ໌.*



## ຂໍການຮັກສາປິ່ນປົວ

ພຣະນາມ ຂອງພຣະອົງ ຄືການຮັກສາປິ່ນປົວຂອງຂ້າພຣະອົງ, ຂ້າແດ່ພຣະຜູ້ເປັນເຈົ້າຂອງຂ້າພຣະອົງ, ແລະ ການລະນຶກເຖິງພຣະອົງ ຄືທິບໂອສົດຂອງຂ້າພຣະອົງ. ການເຂົ້າໃກ້ພຣະອົງ ຄືຄວາມຫວັງຂອງຂ້າພຣະອົງ, ແລະ ຄວາມຮັກ ທີ່ມີຕໍ່ພຣະອົງນັ້ນ ຄື ການຮັກສາປິ່ນປົວ ແລະ ຊ່ວຍເຫລືອຂ້າພຣະອົງ ທັງໃນໂລກນີ້ ແລະ ໂລກໜ້າ.